

## ຄະນະ...

(ສພຊ) ວັນທີ 15 ພະຈິກ ຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ, ປະທານອົງການກວດກາແຫ່ງລັດ, ທ່ານ ວຽງທະວີສອນ ເທບພະຈັນ ກຳມະການສຳຮອງສູນກາງພັກ, ປະທານອົງການກວດສອບແຫ່ງລັດ, ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ຮອງປະທານອົງການກວດກາແຫ່ງລັດ ແລະ ຮອງປະທານອົງການກວດສອບແຫ່ງລັດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ເພື່ອປຶກສາຫາລື ແລະ ຮ່ວມກັນຊອກຫາວິທີແກ້ໄຂບັນຫາເຄັ່ງຮ້ອນຮີບດ່ວນ ທີ່ເກີດຂຶ້ນໃນສັງຄົມ ແລະ ສິ່ງຜົນກະທົບຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ, ຊີວິດການເປັນຢູ່ຂອງປະຊາຊົນ; ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດຂັ້ນຕ່າງໆ; ພ້ອມນັ້ນ, ກໍເພື່ອສ້າງຄວາມເປັນເອກະພາບລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ໃນການແກ້ໄຂບັນຫາຕ່າງໆ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ແຜນການເຄື່ອນໄຫວ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ລາຍງານຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ບົດລາຍງານການແກ້ໄຂຜົນການກວດສອບ ປະຈຳປີ 2022; ລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2020 ແລະ ປີ 2021; ພ້ອມກັນນັ້ນ, ກໍໄດ້ທົບທວນຄືນກົນໄກການປະສານງານ ລະຫວ່າງສະພາແຫ່ງຊາດ ກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນໄລຍະຜ່ານມາ ແລະ ທິດທາງແຜນການປະສານງານໃນຕໍ່ໜ້າ.

(ສົມນຶກ ແກ້ວໄຊຍະຈັກ)

## ສະພາແຫ່ງຊາດ...

ລັດຖະທຳມະນູນ ແລະ ກົດໝາຍ; ເພື່ອປຶກສາຫາລື ແລະ ຮ່ວມກັນຊອກຫາວິທີການແກ້ໄຂ ບັນຫາເຄັ່ງຮ້ອນຮີບດ່ວນ ທີ່ເກີດຂຶ້ນໃນສັງຄົມ ທີ່ພົວພັນກັບການດຳເນີນຄະດີຕາມຂະບວນການຍຸຕິທຳ, ບັນຫາທີ່ພົວພັນກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທັງເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດຂັ້ນຕ່າງໆ.

ກອງປະຊຸມ ໄດ້ຮັບຟັງການລາຍງານການປະຕິບັດບົດບາດຂອງອົງການໄອຍະການປະຊາຊົນສູງສຸດ ໃນການຕິດຕາມກວດກາການດຳເນີນຄະດີຢູ່ສານ; ລາຍງານສະພາບການດຳເນີນຄະດີສາມຂັ້ນ, ສານຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ແລະ ສາເຫດເກີດຈາກໃສ ໂດຍສະເພາະການຊັກຊ້າ, ແກ່ຍາວ, ຫລິບໄປຫລິບມາ ແລະ ຄູ່ຄວາມຍັງບໍ່ພໍໃຈຕໍ່ການຕັດສິນໃຈ, ພິພາກສາຂອງສານ.



## ປະທານ...

ແລກປ່ຽນຄຳຄິດຄຳເຫັນກ່ຽວກັບການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມື ຂອງສອງປະເທດ ກໍຄືສອງອົງການນິຕິບັນຍັດ ໄດ້ເປັນເອກະພາບກັນ ຈະຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆ ທີ່ສອງລັດຖະບານ ໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິຜົນສູງ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ; ສອງຝ່າຍເຫັນດີນຳກັນຈະພ້ອມກັນປັບປຸງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຕູຣານໃຫຍ່ ໃນຊຸມປີຕໍ່ໜ້າ ເຊິ່ງການພົບປະໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບເປັນກັນເອງ.

ຕອນທ້າຍ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໃນນາມສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນມົງໂກລີ ທີ່ໄດ້ໃຫ້ການຊ່ວຍເຫລືອຢ່າງຫລວງຫລາຍຕໍ່ປະຊາຊົນລາວຕະຫລອດໄລຍະຜ່ານມາ ແລະ ອວຍພອນໃຫ້ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ລະຫວ່າງ ສອງປະເທດ ລາວ-ມົງໂກລີ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ ຂອງສອງປະເທດ ລາວ-ມົງໂກລີ ຈົ່ງສືບຕໍ່ນັບມື້ນັບໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ. ພ້ອມນັ້ນ, ພະນະທ່ານປະທານສະພາແຫ່ງຊາດລາວ ຍັງໄດ້ເຊື້ອເຊີນ ພະນະທ່ານປະທານສະພາຕູຣານໃຫຍ່ມົງໂກລີ ມາຢ້ຽມຢາມ ສປປລາວ ໃນເວລາທີ່ເໝາະສົມ ແລະ ປະທານສະພາຕູຣານໃຫຍ່ມົງໂກລີ ໄດ້ຮັບເອົາການເຊື້ອເຊີນດັ່ງກ່າວດ້ວຍຄວາມຍິນດີ.



## ຮອງປະທານ...

(ສພຊ) ວັນທີ 16 ພະຈິກ 2022, ທີ່ສະພາແຫ່ງຊາດ, ສະຫາຍ ສຈ.ປອ ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ເຟນານໂດ ກອງຊາເລສ ໂຢ ປະທານສະຖາບັນກູບາເພື່ອມິດຕະພາບກັບນາໆຊາດວິລະຊົນກູບາພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ.

ໂອກາດດັ່ງກ່າວ, ສະຫາຍ ສຈ.ປອ ຈະເລີນ ເຍຍປາວເຮີ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປລາວ ຂອງ ຄະນະຜູ້ແທນສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ໃນໄລຍະຜ່ານມາເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ກູບາ ແລະ ກູບາ-ລາວ ສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງຂຶ້ນເລື້ອຍໆ ເຊິ່ງສະແດງໃຫ້ເຫັນການນຳຂັ້ນສູງຂອງສອງປະເທດມີການໄປມາຫາສູ່, ພົບປະຢ້ຽມຢາມເຊິ່ງກັນແລະກັນ ຢ່າງເປັນປົກກະຕິ ສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ; ການພົວພັນຮ່ວມມືຂອງບັນດາຂະແໜງການເປັນຕົ້ນແມ່ນຂະແໜງການສຶກສາ, ສາທາລະນະສຸກ ແລະ ກິລາ ພວມໄດ້ຮັບການເສີມຂະຫຍາຍຕາມທ່າແຮງຂອງສອງຝ່າຍ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງປະເທດຢ່າງແທ້ຈິງ.

ຈາກນັ້ນ, ໄດ້ເຂົ້າຮ່ວມພົບປະສອງຝ່າຍ ເຊິ່ງທັງສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນ ໃຫ້ກັນຊາບ ແລະ ຕີລາຄາການພົວພັນຮ່ວມມືດ້ານການທູດປະຊາຊົນ ກໍຄືການເຄື່ອນໄຫວຈັດກິດຈະກຳສະໜັບສະໜູນຊ່ວຍເຫລືອເຊິ່ງກັນແລະກັນ ໃນໄລຍະຜ່ານມາ, ປຶກສາຫາລື ແລະ ວາງທິດທາງແຜນການຮ່ວມມືກັນໃນຕໍ່ໜ້າ. ສອງຝ່າຍເຫັນດີເປັນເອກະພາບກັນໃນການສືບຕໍ່ພົວພັນຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫລືອເຊິ່ງກັນແລະກັນ ທັງໃນເວທີພາກພື້ນ ແລະ ສາກົນ.

(ຂ່າວ: ສຸພາວັນ ຫອມສະນິດ,
ພາບ: ສອນສັກ ວັນວິໄຊ)





# ສະຫລຸບຄືນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ ຢູ່ແຂວງສາລະວັນ



(ສພຂ) ໃນຕົ້ນເດືອນພະຈິກຜ່ານມານີ້, ທີ່ສະໂມສອນແຂວງສາລະວັນ ຄະນະຮັບຜິດຊອບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດແຂວງ ໄດ້ຈັດກອງປະຊຸມສະຫລຸບຄືນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ ປະຈຳ 9 ເດືອນ ແລະ ວາງທິດທາງແຜນການ 3 ເດືອນທ້າຍປີ 2022; ໂດຍການເປັນປະທານຮ່ວມກອງປະຊຸມຂອງທ່ານ ພົຕ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ແລະ ທ່ານ ສີເຮັງ ທອນສີມບັດ ປະທານສະພາປະຊາຊົນແຂວງສາລະວັນ ທັງເປັນຮອງຫົວໜ້າຄະນະຮັບຜິດຊອບວາລະແຫ່ງຊາດແກ້ໄຂບັນຫາຢາເສບຕິດຂັ້ນແຂວງ, ມີບັນດາທ່ານຄະນະຮັບຜິດຊອບວາລະແຫ່ງຊາດ ແກ້ໄຂບັນຫາຢາເສບຕິດຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງ, ເຈົ້າເມືອງ 8 ຕົວເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ພັທ. ເຄນຄຳ ວໍລະຈິດ ຫົວໜ້າຫ້ອງການ ປກຊ-ປກສ ແຂວງສາລະວັນ, ເລຂາຄະນະຮັບຜິດຊອບວາລະແຫ່ງຊາດ ວ່າດ້ວຍແກ້ໄຂບັນຫາຢາເສບຕິດຂັ້ນແຂວງ ໄດ້ລາຍງານໃນກອງປະຊຸມວ່າ: ໃນໄລຍະຜ່ານມາ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມນິຕິກຳ ແລະ ເອກະສານຕ່າງໆໄດ້ 375 ບ້ານກວມເອົາ 64,87% ຂອງຈຳນວນບ້ານທົ່ວແຂວງ, ມີຜູ້ເຂົ້າຮ່ວມ 61.839 ຄົນ ກວມ 65,01%; ລົງເກັບກຳຂໍ້ມູນ ແລະ ຂຶ້ນບັນຊີກຸ່ມເປົ້າໝາຍທີ່ພົວພັນຢາເສບຕິດໃນທົ່ວແຂວງ ໄດ້ 9.772 ຄົນ, ຍິງ 95 ຄົນ; ໃນນັ້ນ, ເປົ້າໝາຍເສບຢາເສບຕິດໄດ້ 8.802 ຄົນ, ຍິງ 62 ຄົນ, ເປົ້າໝາຍຄ້າ-ຂາຍ ໄດ້ 970 ຄົນ, ຍິງ 33 ຄົນ, ມາຮອດປະຈຸບັນເປົ້າໝາຍທີ່ພົວພັນຢາເສບຕິດຫລຸດລົງຍັງເຫລືອ 8.060 ຄົນ, ຍິງ 84 ຄົນ; ໃນນັ້ນ, ເສບ7.210 ຄົນ, ຍິງ 57 ຄົນ, ຄ້າຂາຍ 850 ຄົນ, ຍິງ 27 ຄົນໄດ້ເຮັດບົດບັນທຶກ ແລະ ສຶກສາອົບຮົມເປົ້າໝາຍມົ້ວສຸມຢາເສບຕິດ ໄດ້ 2.304 ຄົນ, ມ້າງຄະດີຢາເສບຕິດມີ 88 ເລື່ອງ, ກັກຕົວຜູ້ຕ້ອງຫາ ໄດ້ 120 ຄົນ, ຍຶດຂອງກາງປະເພດຢາບ້າ ໄດ້ 267.118 ເມັດ, ຢາໄອ 1 ກິໂລ ກັບ 11 ຖົງນ້ອຍ, ລົດໃຫຍ່ 6 ຄັນ ແລະ ວັດຖຸອື່ນໆຈຳນວນໜຶ່ງ, ສົ່ງຢາເສບຕິດໄປວິໄຈໄດ້ທັງໝົດ 361 ຕົວຢ່າງ, ສົ່ງຄະດີໃຫ້ໄອຍະການ 14 ເລື່ອງ ແລະ ຜົນງານຂະແໜງການອື່ນໆ ກໍມີຜົນສຳເລັດເປັນກ້າວໆ.

(ຂ່າວ: ນາງ ຄັດສອນ ຮຸ່ງສະຫວ່າງ; ພາບ:ດີລຳພົນ ພົມມະຈັນ)

**ຍົກສູງ...**

ເຂົ້າຮ່ວມເປັນປະທານຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ ຮອງປະທານສະພາແຫ່ງຊາດ, ມີສະຫາຍ ພົຕ. ຄຳຫລ້າ ພັນໄຊຍະສຸກ ຫົວໜ້າການເມືອງ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ຄະນະຕິດຕາມຈາກສະພາແຫ່ງຊາດ, ຄະນະກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ຄະນະພັກ-ຄະນະອຳນວຍການ, ບັນດາສະຫາຍພະນັກງານ-ຄູອາຈານ ພ້ອມນັກສຶກສາໃນ 44 ຫົວໜ່ວຍທີ່ຂຶ້ນກັບເຂົ້າຮ່ວມ.

ສະຫາຍ ພົຕ. ຄຳຫລ້າ ພັນໄຊຍະສຸກ ຫົວໜ້າການເມືອງ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ໄດ້ຜ່ານບົດລາຍງານກ່ຽວກັບປະຫວັດຄວາມເປັນມາ ແລະ ຜົນສຳເລັດໂດຍຫຍໍ້ຂອງວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ໄດ້ຖືສຳຄັນໃນການສຶກສາອົບຮົມການເມືອງ-ແນວຄິດການສ້າງພັກ, ສ້າງພະນັກງານ, ສ້າງອົງການຈັດຕັ້ງມະຫາຊົນ, ສະພາບແນວຄິດການເມືອງມີຄວາມໜັກແໜ້ນ, ກົມກອງມີຄວາມສະຫງົບ, ຄວາມສາມັກຄີເປັນເອກະພາບ ແລະ ຄວາມຮັບຜິດຊອບປະຕິບັດໜ້າທີ່ສູງ, ປະຕິບັດໜ້າທີ່ການເມືອງຂອງຕົນ ແລະ ການມອບໝາຍໜ້າທີ່ຂອງພັກ-ລັດ ກໍຄື ກະຊວງປ້ອງກັນປະເທດຢ່າງມີຜົນສຳເລັດສູງ.

ໃນກອງປະຊຸມ, ສະຫາຍ ນາງ ສີມພຽນ ວົງໄຊ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະພາປະຊາຊົນນະຄອນຫລວງວຽງຈັນ ໄດ້ສະເໜີເອກະສານທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II.

ສະຫາຍ ພົ.ວ ສີມວັນ ທຳມາໄຊ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາແຫ່ງຊາດ ໄດ້ສະເໜີເອກະສານຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂງ.

ໂອກາດດັ່ງກ່າວ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ສັງລວມຄວາມເຫັນ, ຕັ້ງຄຳຖາມເຈາະຈີ້ມ ແລະ ສະເໜີໃຫ້ຜູ້ແທນກອງປະຊຸມ ໄດ້ປະກອບຄຳເຫັນ ແລະ ໂອ້ລົມໃຫ້ນາຍ ແລະ ພົນທະຫານ ພ້ອມທັງເນັ້ນໃຫ້ຄະນະພັກ-ຄະນະອຳນວຍການ ຕະຫລອດຮອດນາຍ ແລະ ພົນທະຫານ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ເອົາໃຈໃສ່ຮັກສາມູນເຊື້ອອັນດີງາມຂອງກອງທັບ, ສືບຕໍ່ເຝິກຝົນທາດແທ້ປະຕິວັດ, ຄວາມຈົງຮັກພັກດີຕໍ່ປະເທດຊາດ, ຍອມເສຍສະຫລະເພື່ອຊາດ, ເພື່ອປະຊາຊົນຂອງນາຍ ແລະ ພົນທະຫານ ໃຫ້ຖືເປັນບັນຫາສຳຄັນໃຈກາງ, ທັງເປັນການສືບທອດພາລະກິດປະຕິວັດທີ່ນັກຮົບປະຕິວັດຮຸ່ນທຳອິດ ແລະ ຮຸ່ນຕໍ່ໆມາໄດ້ມອບໝາຍໃຫ້, ສ້າງຄວາມເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດຢ່າງໜັກແໜ້ນ, ຖືເອົາກຳລັງປະກອບອາວຸດເປັນກຳລັງຫລັກແຫລ່ງ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ທັງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ກໍຄື ກົດໝາຍ ຕໍ່ປະຊາຊົນ, ນາຍ ແລະ ພົນທະຫານ ຕ້ອງສືບຕໍ່ເຝິກຝົນລະບຽບວິໄນ, ຖືລະບຽບວິໄນເປັນທາດແທ້, ເປັນຊີວິດຈິດໃຈຂອງຕົນ ຕິດພັນກັບຈັນຍາບັນຂອງກອງທັບປະຕິວັດ, ລະບຽບວິໄນກອງທັບຕ້ອງເຄັ່ງຄັດ, ມີຄວາມເດັດຂາດໃນການບັງຄັບບັນຊາ, ເພື່ອປະຕິບັດໜ້າທີ່ເປັນຮົ້ວປ້ອງກັນຊາດທີ່ເຂັ້ມແຂງ, ສາມາດປົກປັກຮັກສາອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ໃຫ້ໝັ້ນຄົງ.

(ອານຸສອນ ພູມມີທອນ)



**ສືບຕໍ່...**

ແລະ ປະເມີນຜົນການປະຕິບັດໜ້າທີ່ການເມືອງ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບັນດາກົມກອງຮາກຖານ ພ້ອມທັງລົງຊຸກຍູ້, ປຸກລະດົມ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ II.

ໃນກອງປະຊຸມຜູ້ເຂົ້າຮ່ວມໄດ້ຮັບຟັງບົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II; ເອກະສານກ່ຽວກັບສະພາບຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ; ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໂອກາດດັ່ງກ່າວ, ທ່ານ ພົ.ວ ສີມວັນ ທຳມາໄຊ ໄດ້ມີຄຳເຫັນໂອລົມຕໍ່ນາຍ ແລະ ພົນທະຫານ ເຊິ່ງມີເນື້ອໃນບາງຕອນວ່າ: ໃຫ້ພ້ອມກັນສຶກສາອົບຮົມການເມືອງນຳພາແນວຄິດພະນັກງານຫລັກແຫລ່ງ-ຄູ, ນາຍ ແລະ ພົນທະຫານ ເອກະພາບກັບແນວທາງນະໂຍບາຍຂອງພັກ, ປະຕິບັດລັດຖະ



ທຳມະນູນ, ກົດໝາຍ ລະບຽບຂອງກອງທັບ; ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນກົມກອງ ແລະ ອ້ອມຂ້າງ ໂດຍຢູ່ພາຍໃນການນຳພາຂອງໜ້າທີ່ແຕ່ລະຂັ້ນຢ່າງໜັກແໜ້ນ; ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ພ້ອມກັນສູ້ຊົນປະຕິບັດ 4 ໜ້າທີ່ໃຫຍ່, 26 ແຜນງານທີ່ຄະນະພັກວາງອອກຕິດພັນກັບໜ້າທີ່ການເມືອງຂອງກົມກອງ, ສ້າງພະນັກງານ-ນາຍທະຫານທາງດ້ານທິດສະດີການເມືອງ, ແກ້ໄຂຊີວິດການເປັນຢູ່ຂອງກົມກອງ ກໍຄືນາຍ ແລະ ພົນທະຫານ ໃຫ້ດີຂຶ້ນເທື່ອລະກ້າວ ເພາະມັນຕິດພັນກັບວາລະແຫ່ງຊາດ; ຕ້ອງຮັກສາໄດ້ທາດແທ້ຂອງການປະຕິວັດ, ຄວາມຈົງຮັກພັກດີຕໍ່ປະເທດຊາດ ຍອມເສຍສະຫລະເພື່ອຊາດ ເພື່ອປະຊາຊົນຢ່າງແທ້ຈິງ.

(ກົງທະນູຄຳ ພິພັດເສລີ)

## ເບີໂທສຸກເສີນ

**❑ ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າ ມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

# ສພຊ ສາລະວັນ ສະຫລຸບຖອດຖອນບົດຮຽນການຕ້ອນຮັບເອກອັກຄະລັດຖະທູດມົງໂກລີ



(ສພຊ) ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ສະຫລຸບຖອດຖອນບົດຮຽນການຕ້ອນຮັບເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມແຫ່ງມົງໂກລີ ປະຈຳລາວ ທີ່ໄດ້ເຄື່ອນໄຫວເຮັດວຽກຢູ່ແຂວງສາລະວັນໃນໄລຍະຜ່ານມາ ເຊິ່ງໃນກອງປະຊຸມຄັ້ງນີ້ ໄດ້ຮັບຟັງການລາຍງານຜົນສຳເລັດໃນການຕ້ອນຮັບເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມແຫ່ງມົງໂກລີ ປະຈຳລາວ ເຊິ່ງຜ່ານການຢ້ຽມຢາມ ແລະເຮັດວຽກ ສາມາດຕີລາຄາປະເມີນຜົນສຳເລັດທີ່ມີຄວາມໝາຍຄວາມສຳຄັນ ໄດ້ປະກອບສ່ວນເພີ່ມພູນຄູນສ້າງສາຍພົວພັນ ທີ່ເປັນມູນເຊື້ອຂອງສອງຊາດລາວ-ມົງໂກລີເວົ້າລວມ ເວົ້າສະເພາະການພົວພັນລະຫວ່າງແຂວງສາລະວັນ ກັບແຂວງຕ່າງໆຂອງປະເທດມົງໂກລີ ໃຫ້ເຂົ້າສູ່ລວງເລິກ ໂດຍປະເທດມົງໂກລີຈະໃຫ້ທຶນການສຶກສາແພດສາດໃນປີ 2023 ແລະ ຈະຂົນຂວາຍແຫລ່ງທຶນຈາກເອກະຊົນມາຊ່ວຍຈັດຊື້ອຸປະກອນການແພດຈຳນວນໜຶ່ງ, ໃນໄລຍະຍາວກໍຈະໄດ້ນຳສະເໜີລັດຖະບານກໍ່ສ້າງຊັບພະຍາກອນມະນຸດຕື່ມອີກ; ແຂວງສາລະວັນໄດ້ໂຄສະນາປະຊາສຳພັນແຫລ່ງທ່ອງທ່ຽວ ແລະທ່າແຮງດ້ານຕ່າງໆ ເພື່ອໃຫ້ຝ່າຍເອກອັກຄະລັດຖະທູດມົງໂກລີປະຈຳ ສປປລາວ ໄດ້ປຸກລະດົມນັກທ່ອງທ່ຽວ ແລະ ນັກລົງທຶນເຂົ້າມາ ແຂວງສາລະວັນ ແລະ ຍິນດີຕ້ອນຮັບແຂວງແຮກສ່ຽວເພື່ອຮ່ວມມືກັນໃນຕໍ່ໜ້າ ແລະ ຍາວນານ.

ຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ເພື່ອເປັນການທົບທວນຄືນໃນການຈັດຕັ້ງປະຕິບັດບັນດາໜ້າວຽກໃນຜ່ານມາ, ຖອດຖອນບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ເຊັ່ນການປະສານງານ, ງົບປະມານຮັບໃຊ້, ດ້ານພິທີການໃຫ້ມີຄວາມຈົບງາມເປັນລະບຽບຮຽບຮ້ອຍເພື່ອນຳໄປປັບປຸງໃນຄັ້ງຕໍ່ໄປ ໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນໃນຕອນເຊົ້າວັນທີ 8 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັ່ງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 14 ທັງເປັນປະທານ ສພຂ, ມີທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານ ສພຂ ພ້ອມດ້ວຍຄະນະກຳມະການ, ຄະນະເລຂາທິການ ສພຂ; ຫົວໜ້າ-ຮອງຫົວໜ້າພະແນການອ້ອມຂ້າງແຂວງເຂົ້າຮ່ວມ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

# ຮັບຟັງການລາຍງານວຽກງານພົ້ນເດັ່ນໄລຍະໜຶ່ງປີຂອງ 2 ຂົງເຂດວຽກງານ



(ສພຊ) ລະຫວ່າງທີ 10-11 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມລາຍງານວຽກງານພົ້ນເດັ່ນໃນໄລຍະໜຶ່ງປີຜ່ານມາ ຂອງ 2 ຂົງເຂດຄື: ຂົງເຂດຍຸດຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ແລະ ຂົງເຂດວັດທະນະທຳ-ສັງຄົມ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນການ-ອົງການ, ຕາງໜ້າພາກສ່ວນທີ່ກ່ຽວຂ້ອງ ແລະ ພະນັກງານຂະແໜງຊ່ວຍວຽກສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນການຈັດກອງປະຊຸມຄັ້ງນີ້, ເພື່ອສະຫລຸບລາຍງານພົ້ນເດັ່ນ, ມີຂໍ້ສະດວກ-ຂໍ້ຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາຕາມຄຳຖາມເຈາະຈີ້ມຂອງສະພາປະຊາຊົນແຂວງ ແລະ ມີຄຳສະເໜີເພື່ອເປັນການແລກປ່ຽນຄຳຄິດເຫັນທັງເປັນການສະໜອງຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ຈະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນເດືອນທັນວາ 2022.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປະກອບຄຳຄິດຄຳເຫັນ ແລກປ່ຽນເຊິ່ງກັນແລະກັນ ກ່ຽວກັບຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບມີ: ອົງການໄອຍະການ, ສານປະຊາຊົນແຂວງ, ພະແນກຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ແລະ ຂົງເຂດວັດທະນະທຳ-ສັງຄົມ; ພະແນກສຶກສາທິການ ແລະ ກິລາ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກສາທາລະນະສຸກ ແລະ ພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນເພີ່ມຕື່ມຕໍ່ບັນດາພະແນກການ-ອົງການ ແລະ ຄະນະຮັບຜິດຊອບ ຈົ່ງຮີບຮ້ອນສັງລວມບັນດາເນື້ອໃນ, ບັນດາຄຳສະເໜີຕ່າງໆ, ປັບປຸງ ແລະ ສົ່ງບົດລາຍງານດັ່ງກ່າວ ເປັນລາຍລັກອັກສອນໃຫ້ຄະນະປະຈຳສະພາປະຊາຊົນແຂວງ ທັນຕາມກຳນົດເວລາ.

(ສີແຫວງ ສີບຸນເຮືອງ)

# ແລກປ່ຽນບົດຮຽນວຽກງານ ສະພາປະຊາຊົນແຂວງ 4 ແຂວງພາກໃຕ້




(ສພຊ) ກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງສະພາປະຊາຊົນ 4 ແຂວງພາກໃຕ້ ຄັ້ງທີ I ໂດຍສະພາປະຊາຊົນແຂວງອັດຕະປື ເປັນເຈົ້າພາບ ໄດ້ມີຂຶ້ນໃນວັນທີ 11 ພະຈິກ 2022 ທີ່ຫໍປະຊຸມໃຫຍ່ຂອງແຂວງອັດຕະປື ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື, ມີບັນດາທ່ານປະທານ-ຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນ 4 ແຂວງພາກໃຕ້ຄື: ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ເຂົ້າຮ່ວມ.

ການພົບປະໃນຄັ້ງນີ້, ແມ່ນແນໃສ່ການປັບປຸງ ແລະ ແລກປ່ຽນຖອດຖອນບົດຮຽນວຽກງານຂອງສະພາປະຊາຊົນແຂວງ ເປັນຕົ້ນແມ່ນການເປັນເສນາທິການທີ່ດີໃຫ້ແກ່ການກະກຽມຈັດກອງປະຊຸມໃນແຕ່ລະໄລຍະ ແລະ ຂອດການພົວພັນປະສານງານທັງພາຍໃນ-ພາຍນອກ ໃນການບໍລິຫານວຽກງານຮອບດ້ານ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ລະບົບກົນໄກການສ້າງນິຕິກຳໃຕ້ກົດໝາຍ, ຂັ້ນຕອນ ແລະ ກົນໄກຄົ້ນຄວ້າພິຈາລະນາຮັບຮອງໂຄງການລົງທຶນຂອງລັດ ແລະ ຮັບຮອງແຜນງົບປະມານແຫ່ງລັດຂອງແຂວງ, ກົນໄກປະສານງານ ໃນການແກ້ໄຂຜົນການກວດສອບ, ການຕິດຕາມກວດກາການຈັດຕັ້ງປະຕິບັດຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ແລະ ການຄຸ້ມຄອງປົກປ້ອງການເຄື່ອນໄຫວວຽກງານສາສະໜາໃນຂົງເຂດບັນດາເຜົ່າ ສະນັ້ນ, ກອງປະຊຸມແມ່ນມີຄວາມໝາຍຄວາມສຳຄັນຫລາຍ, ທີ່ໄດ້ມີໂອກາດພົບປະແລກປ່ຽນບົດຮຽນເຊິ່ງກັນແລະກັນ ລະຫວ່າງສະພາປະຊາຊົນ 4 ແຂວງພາກໃຕ້ ເພື່ອນຳເອົາບົດຮຽນດັ່ງກ່າວ ໄປໝູນໃຊ້ໃນການຈັດຕັ້ງປະຕິບັດແບບແຜນວິທີເຮັດວຽກງານຂອງສະພາປະຊາຊົນແຂວງໃຫ້ໄດ້ຍົກລະດັບຄຸນນະພາບ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ປະຕິບັດສາມພາລະບົດບາດດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາ.

ພ້ອມດຽວກັນນັ້ນ, ໄດ້ພ້ອມກັນເສີມຂະຫຍາຍຄວາມຮັບຜິດຊອບ, ສຸມສະຕິປັນຍາເຂົ້າໃນການແລກປ່ຽນບົດຮຽນ, ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍນຳເອົາບົດຮຽນ, ປະສົບການໃນການຈັດຕັ້ງປະຕິບັດຕົວຈິງ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານຂໍ້ຄົງຄ້າງ, ສາເຫດກໍຄືບົດຮຽນທີ່ເປັນປະໂຫຍດ ເພື່ອພ້ອມກັນປັບປຸງຊອກຫາວິທີທາງແກ້ໄຂເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ ເຮັດໃຫ້ການປະຕິບັດໜ້າທີ່ວຽກງານສະພາປະຊາຊົນແຂວງມີຄວາມໜັກແໜ້ນ, ເຂັ້ມແຂງ ທັງປະລິມານ ແລະ ຄຸນນະພາບ.

ຕອນທ້າຍ, ກອງປະຊຸມເຫັນດີເປັນເອກະພາບ ໂດຍມອບໃຫ້ແຂວງເຊກອງ ເປັນເຈົ້າພາບພົບປະແລກປ່ຽນບົດຮຽນສະພາປະຊາຊົນ 4 ແຂວງພາກໃຕ້ ໃນຄັ້ງຕໍ່ໄປ.

(ວິນັດ)

# ເຜີຍແຜ່ດຳລັດຂອງລັດຖະບານ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ



(ສພຊ) ໃນວັນທີ 11 ພະຈິກຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ຈັດກອງປະຊຸມເຜີຍແຜ່ດຳລັດຂອງລັດຖະບານ ສະບັບເລກທີ 205/ລບ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍໃຫ້ພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີທ່ານ ນາງຈັນທະຄອນ ສີອຳພອນ ຮອງປະທານສະພາປະຊາຊົນແຂວງ, ມີປະທານ-ຮອງປະທານຄະນະກຳມະການ, ເລຂາທິການ-ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງວຽງຈັນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ດຳລັດເລກທີ 205/ລບ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ແລະ ຮັບຟັງການເຜີຍແຜ່ເອກະສານສຳຄັນຄື: ແຈ້ງການເລກທີ 2613/ກງ ກ່ຽວກັບການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ ງວດ 4 ປີ 2022, ເອກະສານທັກສະໃນການປະກອບຄຳເຫັນໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ເອກະສານທັກສະໃນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໃນຕອນທ້າຍ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານ ບຸນສອນ ເພັດລາວັນ ເຊິ່ງທ່ານໄດ້ເນັ້ນໜັກບາງດ້ານຄື: ການປະຢັດແມ່ນການຫລຸດຜ່ອນຄ່າສິ້ນເປືອງໃນການນຳໃຊ້ງົບປະມານຂອງລັດ, ແຫລ່ງທຶນ, ຊັບສິນ, ແຮງງານ, ເວລາ, ຊັບພະຍາກອນທຳມະຊາດ ແລະ ອື່ນໆ ທີ່ມີຢູ່ຢ່າງຈຳກັດ ໃຫ້ມີປະສິດທິຜົນສູງສຸດ, ການຕ້ານການຟູມເຟືອຍແມ່ນການປຸກຈິດສຳນຶກໃນການສ້າງແມ່ນ, ປະຕິບັດລາຍຈ່າຍງົບປະມານຂອງລັດເພື່ອຫລີກລ່ຽງການໃຊ້ຈ່າຍບໍ່ມີເຫດຜົນ ແລະ ບໍ່ສ້າງຄວາມອັບປະໂຫຍດ ໃຫ້ແກ່ລັດ ແລະ ສັງຄົມ.

(ນັກຂ່າວ ສພຂ ວຽງຈັນ)

## ເຊັນບົດບັນທຶກຮ່ວມລະຫວ່າງ ຄຍປປ ກັບ 3 ອົງການ



(ສພຊ) ຕອນບ່າຍຂອງວັນຈັນວັນທີ 14 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໄດ້ຈັດພິທີເຊັນບົດບັນທຶກຮ່ວມການປະສານງານລະຫວ່າງຄະນະກຳມະການຍຸຕິທຳ ແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສະພາປະຊາຊົນແຂວງອຸດົມໄຊ ກັບ 3 ອົງການ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ນາງ ຈັນສະໝອນ ທິບພະທົງ ປະທານອົງການກວດກາລັດແຂວງ, ທ່ານ ທອງຄານ ວັດສະດາກອນ ປະທານຄະນະກຳມະການຍຸຕິທຳ ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຜູ້ຕາງໜ້າກອງບັນຊາການທະຫານແຂວງ, ສະຫະພັນນັກຮົບເກົ່າແຂວງ, ຫົວໜ້າຂະແໜງ ແລະ ວິຊາການຂະແໜງກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ການເຊັນບົດບັນທຶກໃນຄັ້ງນີ້, ແມ່ນເພື່ອເປັນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງ ສະບັບເລກທີ 70/ອຊ, ລົງວັນທີ 4 ກຸມພາ 2022 ເພື່ອເຮັດໃຫ້ການປະສານງານ ແລະ ການສະໜອງຂໍ້ມູນເຊິ່ງກັນແລະກັນ ມີຄວາມສະດວກ, ວ່ອງໄວທັນກັບເວລາ.

ໃນພິທີ, ຄະນະຮັບຜິດຊອບໄດ້ຜ່ານບົດບັນທຶກຮ່ວມການປະສານງານລະຫວ່າງ ຄຍປປ ສະພາປະຊາຊົນແຂວງ ກັບ 3 ອົງການຄື: ອົງການກວດກາລັດແຂວງ, ກອງບັນຊາການທະຫານແຂວງ ແລະ ສະຫະພັນນັກຮົບເກົ່າແຂວງ ເຊິ່ງເນື້ອໃນບົດບັນທຶກປະກອບມີ 3 ໝວດ, 7 ມາດຕາ ໄດ້ກຳນົດຫຼັກການ, ຂັ້ນຕອນ, ເນື້ອໃນ ແລະ ກົນໄກການປະສານງານ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນໃຫ້ສອດຄ່ອງກັບແນວທາງພັກ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ຕອນທ້າຍພິທີ, ປະທານໄດ້ສະແດງຄວາມຊົມເຊີຍຕໍ່ຄະນະຮັບຜິຊອບຮ່າງບົດບັນທຶກ, ໃນການກະກຽມຮ່າງບົດບັນທຶກການປະສານງານດັ່ງກ່າວ ແລະ ສິ່ງໃຫ້ອົງການກ່ຽວຂ້ອງປະກອບຄຳຄິດເຫັນໃສ່ເຮັດໃຫ້ບົດບັນທຶກດັ່ງກ່າວ ສົມບູນ ແລະ ໄດ້ຕົກລົງເຫັນດີເປັນເອກະພາບເຊັນບົດບັນທຶກນີ້. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ອົງການກ່ຽວຂ້ອງ ນຳເອົາເນື້ອໃນບົດບັນທຶກໄປຈັດຕັ້ງເຊື່ອມຊຶມໃຫ້ແກ່ພະນັກງານ-ລັດຖະກອນ ແລະ ກຳລັງພາຍໃນກົມກອງຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດບົດບັນທຶກຮ່ວມດັ່ງກ່າວ ໃຫ້ປາກົດຜົນເປັນຈິງ.

(ແສງພອນ ອິນນະລົງ)

## ສພຊ ໄຊສົມບູນ ເຂົ້າຮ່ວມຂະບວນການອອກແຮງງານ



(ສພຊ) ເພື່ອປະຕິບັດຕາມໜັງສືແຈ້ງການ ສະບັບເລກທີ 1349/ຄຊປປລ-ຊບ, ລົງວັນທີ 9 ພະຈິກ 2022 ແລະ ເພື່ອເປັນການປະຕິບັດຕາມສິດ, ພາລະບົດບາດຂອງວຽກງານ 3 ອົງການຈັດມະຫາຊົນ; ໃນຕອນບ່າຍຂອງວັນທີ 10 ພະຈິກ 2022 ພະນັກງານ-ລັດຖະກອນຂອງບັນດາພະແນກການ, ອົງການ, ກົມກອງ ຕະຫຼອດຮອດບໍລິສັດ-ລັດວິສາຫະກິດຕ່າງໆທົ່ວແຂວງໄຊສົມບູນ ລວມທັງສະພາປະຊາຊົນແຂວງໄຊສົມບູນ ໄດ້ເຂົ້າຮ່ວມຂະບວນການອອກແຮງງານ ເຊິ່ງນຳພາພະນັກງານຂອງສະພາປະຊາຊົນແຂວງໄຊສົມບູນໂດຍສະຫາຍ ລີຈົ້ງ ເກຍເປົາ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ສະຫາຍ ນາງ ຄຳຫລ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍບັນດາສະຫາຍຄະນະເລຂາຊາວໜຸ່ມໜ່ວຍ, ຄະນະປະທານກຳມະບານໜ່ວຍ ແລະຄະນະປະທານແມ່ຍິງໜ່ວຍ ຕະຫຼອດຮອດສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງສະພາປະຊາຊົນແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ຂະບວນການອອກແຮງງານຄັ້ງນີ້, ແມ່ນໄດ້ອະນາໄມ, ຕັດຫຍ້າຖາງປ່າ ຢູ່ເສັ້ນທາງ ແລະ ຝາກຕ້ານເຈື່ອນ ລຽບແຄມແມ່ນ້ຳຈັ້ງ ເຊິ່ງເລີ່ມແຕ່ຂົວເບຕົງ I ໃນເທສະບານ ບ້ານພູຫົວຊ້າງ ຫາຖ້ຳເຈົ້າອະນຸວົງ ເຊິ່ງແມ່ນກິດຈະກຳໜຶ່ງເພື່ອເປັນການຂໍ່ານັບຮັບຕ້ອນພິທີສົມໂພດຫໍຫລັກເມືອງ ແລະ ຮູບປັ້ນຫລໍ່ ເຈົ້າອະນຸວົງ ທີ່ຕິດພັນກັບກິດຈະກຳສົ່ງເສີມການທ່ອງທ່ຽວ ຢູ່ແຂວງໄຊສົມບູນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ໂດຍ 3 ອົງການຈັດຕັ້ງມະຫາຊົນຂອງສະພາປະຊາຊົນແຂວງໄຊສົມບູນ ໄດ້ມີຄວາມຮັບຜິດຊອບສູງ ປະຕິບັດຈັດຕັ້ງອະນາໄມ, ຕັດຫຍ້າລຽບແຄມນ້ຳຈັ້ງ ຕາມຂອບເຂດທີ່ຂັ້ນເທິງ ມອບໝາຍໄວ້ໃຫ້ຈົບສຳເລັດ ຕາມໜ້າທີ່.

(ນາງ ອຳໄພພອນ ແກ້ວວິໄລ)

## ໜ່ວຍຊາວໜຸ່ມ ສພຂ ຫົວພັນ ສຳເລັດ ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກປະຈຳປີ



(ສພຂ) ວັນທີ 11 ພະຈິກ 2022 ໜ່ວຍຊາວໜຸ່ມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມດຳເນີນບັ້ນຊີວິດການເມືອງ, ກວດກາ, ຕີລາຄາແບ່ງປະເພດການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຄັ້ງທີ II ປະຈຳປີ 2022 ຢູ່ທີ່ຫ້ອງປະຊຸມ ສພຂ ຫົວພັນພາຍໃຕ້ການເປັນປະທານຂອງສະຫາຍ ຄອນສະຫວັນ ຂັນທະວີໄຊເລຂາໜ່ວຍຊາວໜຸ່ມ ສພຂ ຫົວພັນ ໂດຍການເຂົ້າຮ່ວມຂອງສະຫາຍຄຳຟອງ ກົ້ວມີໄຊ ຮອງເລຂາໜ່ວຍພັກ, ເລຂາທິການ ສພຂ ຫົວພັນ, ມີຜູ້ຕາງໜ້າມາຈາກຄະນະບໍລິຫານງານຊາວໜຸ່ມແຂວງ ພ້ອມດ້ວຍບັນດາສະມາຊິກຊາວໜຸ່ມພາຍໃນໜ່ວຍເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດສະຫລຸບຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຂອງໜ່ວຍຊາວໜຸ່ມ ສພຂ ຈາກສະຫາຍ ຄອນສະຫວັນ ຂັນທະວີໄຊ ພ້ອມທັງຮັບຟັງປະກອບຄຳຄິດຄຳເຫັນໃສ່ບົດສະຫລຸບຂອງບັນດາສະຫາຍສະມາຊິກຊາວໜຸ່ມເຮັດໃຫ້ມີເນື້ອໃນຄົບຖ້ວນ ແລະ ການວາງທິດທາງແຜນການໃຫ້ເໝາະສົມກັບຈຸດພິເສດຄວາມເປັນຈິງຂອງໜ່ວຍ ສາມາດຈັດຕັ້ງປະຕິບັດໃຫ້ໄດ້ຕາມຄາດໝາຍ. ຈາກນັ້ນ, ສະມາຊິກຊາວໜຸ່ມທຸກສະຫາຍ ໄດ້ຜ່ານໃບສຳຫລວດຕົນເອງ ທັງພ້ອມກັນຕີລາຄາແບ່ງປະເພດຕາມມາດຖານເງື່ອນໄຂຕາມເນື້ອໃນຂໍ້ແຂ່ງຂັນການສ້າງຊາວໜຸ່ມ 4 ບຸກ ເຊິ່ງພາຍໃນໜ່ວຍມີສະມາຊິກຊາວໜຸ່ມ ທັງໝົດ 36 ສະຫາຍຍິງ 14 ສະຫາຍ, ປະເມີນຜົນຕົວຈິງ 31 ສະຫາຍ ຍິງ 12 ສະຫາຍ.

ຕອນທ້າຍກອງປະຊຸມ, ສະຫາຍ ຄຳຟອງ ກົ້ວມີໄຊ ໄດ້ມີຄຳເຫັນໂອ້ລົມ ໂດຍສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຊາວໜຸ່ມສະພາປະຊາຊົນແຂວງ ຍາດມາໄດ້ໃນໄລຍະໜຶ່ງປີຜ່ານມາ; ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມ ເອົາໃຈໃສ່ນຳພາ-ຊີ້ນຳສະມາຊິກຂອງຕົນຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 4 ບຸກ, ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງສະມາຊິກພາຍໃນໜ່ວຍ ພ້ອມທັງປັບປຸງແບບແຜນວິທີເຮັດວຽກ ແລະ ຮຽກຮ້ອງໃຫ້ສະມາຊິກຊາວໜຸ່ມທຸກສະຫາຍຈົ່ງພ້ອມກັນ ຮັກສາມູນເຊື້ອຄວາມສາມັກຄີ ພາຍໃນ ແລະ ພາຍນອກ ໃຫ້ແໜ້ນແຟ້ນ, ເຝິກຝົນຫລໍ່ຫລອມຕົນເອງ ຊອກສະແຫວງຫາຄວາມຮູ້ໃໝ່ໆ ມາພັດທະນາຕົນເອງ ແລະ ການຈັດຕັ້ງໃຫ້ດີຂຶ້ນ ເອົາໃຈໃສ່ສ້າງເສດຖະກິດຄອບຄົວໃຫ້ໄດ້ລາຍຮັບຫລາຍຂຶ້ນ, ເປັນເຈົ້າການຮັກສາມູນເຊື້ອໜ່ວຍຊາວໜຸ່ມ 4 ບຸກຕະຫລອດໄປ.

(ເວີນ ແກ້ວບຸນມີ)

## ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ



(ສພຊ) ກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄດ້ຈັດຂຶ້ນຢູ່ 5 ຈຸດຂອງແຂວງຄື: ພະແນກຍຸຕິທຳແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ, ປກສ ແຂວງ, ສູນບຳບັດຢາເສບຕິດ ແລະ ຄ້າຍຄຸມຂັງແຂວງ ແລະ ຫ້ອງປະຊຸມໃຫຍ່ເມືອງໄຊຍະບູລີ ໃນລະຫວ່າງວັນທີ 14-16 ພະຈິກ 2022 ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ, ມີຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກຍຸຕິທຳແຂວງ, ປະທານ-ຮອງປະທານສານປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າໄອຍະການປະຊາຊົນແຂວງ, ກົມກອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ ພ້ອມດ້ວຍຫົວໜ້າຂະແໜງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ສົມມະນາ ປິ່ນທິບ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານເອກະສານຈຳນວນ 3 ສະບັບຄື: ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແຕ່ປີ 2021-2023, ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 18 ກໍລະກົດ 2022 ກ່ຽວກັບການຈັດຕັ້ງປະຕິບັດມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາແຜນການຕິດຕາມກວດກາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 8 ກັນຍາ 2022 ກ່ຽວກັບການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX.

ພ້ອມດຽວກັນນີ້, ປະທານໄດ້ມີຄຳຖາມເຈາະຈີ້ມ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ. ຈາກນັ້ນ, ຕາງໜ້າອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ກົມກອງ ແລະ ບັນດາພະແນກການຂອງແຂວງ ໄດ້ລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ເຊິ່ງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງທີ່ໄດ້ຈັດຕັ້ງປະຕິບັດຕົວຈິງຜ່ານມາ ແລະ ບັນດາຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳຄິດຄຳເຫັນຕື່ມອີກ.

ທັງນີ້, ກໍເພື່ອເປັນບ່ອນອີງໃຫ້ແກ່ບັນດາກຳມະທິການ ແລະ ພາກສ່ວນກ່ຽວຂ້ອງ ຫັນເປັນແຜນການລະອຽດຂອງຕົນໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດບັນລຸຜົນສຳເລັດ; ອີກດ້ານໜຶ່ງກໍເພື່ອເປັນຂໍ້ມູນໃນການກະກຽມເນື້ອໃນຕ່າງໆ ເປັນຕົ້ນແມ່ນບົດປະກອບຄຳເຫັນ, ຄຳຊັກຖາມ ແລະ ເອກະສານອື່ນໆ ເພື່ອພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຮັດໃຫ້ການຕິດຕາມກວດກາຢູ່ກອງປະ ຊຸມສະພາແຫ່ງຊາດມີປະສິດທິຜົນ.

(ອິນທີ ຂຽວສີຟ້າ)



## ສຸກສະບາຍຫາຍໂລຄາ

# ວິທີບັນເທົາຂີ້ແຮ້ປຽກ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ຂີ້ແຮ້ປຽກ ເປັນອີກບັນຫາໜຶ່ງທີ່ມັກເກີດຂຶ້ນເລື້ອຍໆກັບຫລາຍໆຄົນ ທັງຍິງ ແລະ ຊາຍ ເຊິ່ງມັນເຮັດໃຫ້ຂາດຄວາມໝັ້ນໃຈ ແລະ ສ້າງຄວາມບໍ່ພໍໃຈຢ່າງຫລວງຫລາຍຕໍ່ກັບຜູ້ກ່ຽວເອງ ເພາະວ່ານອກຈາກເຫື່ອທີ່ອອກມາຫລາຍແລ້ວ ຍັງເຮັດໃຫ້ມີກິ່ນນຳອີກ.

ການທີ່ເຫື່ອອອກຫລາຍນັ້ນແມ່ນເກີດມາຈາກຕ່ອມເຫື່ອທີ່ຜະລິດອອກມາຫລາຍກ່ວາປົກກະຕິ ຈຶ່ງເຮັດໃຫ້ບໍລິເວນຂີ້ແຮ້ມີຄວາມຊຸ່ມຕະຫລອດເວລາ. ສຳລັບທ່ານໃດທີ່ກຳລັງປະສົບກັບບັນຫາເຫລົ່ານີ້ ຢ່າປ່ອຍໃຫ້ເຫື່ອຂອງທ່ານຫລຸດຜ່ອນຄວາມໝັ້ນໃຈຂອງຕົນເອງລົງ ສະນັ້ນ, ໃນຄໍລຳ ສຸກສະບາຍຫາຍໂລຄາ ສະບັບນີ້ຈະນຳສະເໜີການກຳຈັດເຫື່ອຂັ້ນຕົນໃນວົງແຂນຂອງທ່ານ ດັ່ງນີ້:

- ອາບນ້ຳເປັນປະຈຳ: ຢ່າງໜ້ອຍມື້ລະສອງເທື່ອ ເພາະວ່າປະເທດລາວເປັນປະເທດທີ່ຮ້ອນ ຈຶ່ງເຮັດໃຫ້ມີເຫື່ອອອກຫລາຍ ໂດຍສະເພາະຜູ້ທີ່ມັກຫລິ້ນກິລາ ຫລື ອອກກຳລັງກາຍໃນຕອນແລງ.
- ພະຍາຍາມຢ່າໃຫ້ເຫື່ອອອກ: ຖ້າທ່ານຮູ້ວ່າທ່ານເປັນຄົນທີ່ເຫື່ອອອກງ່າຍ ຄວນຈະລະມັດລະວັງບໍ່ໃຫ້ເຫື່ອອອກ ໂດຍເລືອກທີ່ຈະຢູ່ໃນສະຖານທີ່ທີ່ມີລົມລ່ວງດີ.
- ເລືອກເຄື່ອງນຸ່ງທີ່ໃສ່ສະບາຍ: ເລືອກເສື້ອ ທີ່ສວມໃສ່ສະບາຍ ແລະ ລະບາຍອາກາດໄດ້ດີ.
- ຜ້າອະນາໄມສາມາດຊ່ວຍໄດ້: ວິທີການນີ້ອາດຈະແປກ ແຕ່ເປັນຢາບັນເທົາເຫື່ອທີ່ມີປະສິດທິພາບຫລາຍ ເໝາະສຳລັບຄົນທີ່ເຫື່ອອອກຫລາຍ ວິທີການໃຊ້ພຽງແຕ່ໃສ່ຜ້າອະນາໄມຂະໜາດນ້ອຍ ຕິດກັບບໍລິເວນເສື້ອໃຕ້ຂີ້ແຮ້. (ຖ້າທ່ານມີເຫື່ອນ້ອຍສາມາດໃຊ້ວິທີການຕັດເປັນເຄິ່ງເພື່ອປະຢັດ) ເພາະນ້ຳຢາທີ່ມີຢູ່ໃນຜ້າອານາໄມຈະຊ່ວຍດູດຊຶມທາດແຫລວ ຫລື ເຫື່ອໄດ້ເປັນຢ່າງດີ ແລະ ຮັບປະກັນໄດ້ຜົນເຖິງວ່າຂີ້ແຮ້ຂອງທ່ານຈະເຫື່ອອອກຫລາຍພຽງໃດກໍຕາມ.
- ເປືອກໝາກນາວ: ຝານເປືອກໝາກນາວບາງໆ ແລ້ວບີບເອົານ້ຳອອກ ແລ້ວເອົາເປືອກໝາກນາວມາຖູກັບຂີ້ແຮ້ ປະໄວ້ໃຫ້ແຫ້ງ ແລ້ວທາໂຣອອນໃສ່ ກໍຈະຊ່ວຍໄດ້.
- ໃຊ້ໂຣອອນ: ທ່ານຄວນເລືອກຊະນິດທີ່ມີສ່ວນປະກອບຂອງຢາຕ້ານເຊື້ອສະເພາະ (Antiperspirant) ເພາະມັນຈະຊ່ວຍຫລຸດການເຫື່ອອອກ ຫລືສາເຫດທີ່ເຮັດໃຫ້ເກີດການອຸດຕັນໃນທໍ່ເຫື່ອ ພ້ອມທັງຫລຸດຜ່ອນການໄຫລຂອງເຫື່ອ ແລະ ເລືອກໃຊ້ປະເພດທີ່ມີຢາດັບກິ່ນ (deodorant) ເພື່ອຊ່ວຍເຮັດໃຫ້ທ່ານບໍ່ມີກິ່ນເຫື່ອຕະຫລອດທັງວັນ.

## ສາລາກະວີ

# ບຸກຄົນດີເດັ່ນ

# ໂດຍ: ຫລານເຈົ້ານ້ອຍ

❋ ຜົນກວດກາປະກາດໄວ້
ຄົນເດັ່ນດັ່ງປະຈຳປີ
ຖະແຫລງເປັນຄຳເວົ້າ
ໃຫ້ພະນັກງານທົ່ວຫ້ອງ

ໄຂກ່າວເປັນທາງການ
ອອກມາປະຈັກແຈ້ງ
ອອກມາເປັນຕົວຢ່າງ
ການຮູ້ທົ່ວກັນ

❋ ໃນນັ້ນ ເດັ່ນໜຶ່ງໄດ້
ເປັນຄົນດຽວຜົນງານດີ
ຄົນນັ້ນຄືຫົວໜ້າ
ເປັນແວ່ນແຍງສ່ອງໃຫ້

ຄົນເກົ່າຄົນເດີມ
ເດັ່ນດັ່ງໂດຍແທ້
ການນຳພາດີເດັ່ນ
ພະນັກງານໄດ້ໄຕ່ຕາມ ວ່າຊັ້ນ!

❋ ເດັ່ນສອງເພິ່ນເລືອກໄດ້
ສະເຫລີຍມາຍັງເຮົາ
ໃຫ້ຄ່ອຍເດີນຕາມຕ້ອຍ
ຢ່າເປັນຄົນຫຍໍ້ທໍ້

ຮອງທ່ານຄືເຄີຍ
ເຫລົ່າຄົນສະໝຸນນ້ອຍ
ຮອຍທາງເພິ່ນກໍ່
ຄືກໍ້ເກົ່າຫລັງ

❋ ສ່ວນວ່າຊຸມລູກນ້ອງ
ຕາມປະເພນີການ
ຈຶ່ງພາກັນຊຸ່ນຂ້ອງ
ກົ້ມໜ້າເກັບກອດໄວ້

ກາງອ່ອນລົງມາ
ຄັດເລືອກກັນເຄີຍຄຸ້ນ
ຄາໃຈຈາຈິ່ມ
ຄວາມເສົ້າໂສກກະໃຈ

❋ ແປກໃຈຄົນທີ່ໄດ້
ຄົນທີ່ມີວິໄສທັດ
ເປັນຫຍັງຄົນພາຍໃຕ້
ຄືບໍ່ດີເດັ່ນດ້ານ

ຕົວເດັ່ນປະຈຳປີ
ສ່ອງສີໃສແທ້
ການນຳພາຂອງທ່ານ
ຕາມໃຈນັ້ນປາຖະໜາ

❋ ຄັນວ່າເຫລົ່າລູກນ້ອງ
ທ່ານເອງເປັນຄົນນຳພາ
ເຂົາຊິດີຫລືຮ້າຍ
ມີຫຍັງກໍຕ້ອງເວົ້າ

ເຂົາອ່ອນຄືເຫັນ
ຈຶ່ງເປັນແນວນີ້
ນາຍເອງຄວນສອນສັ່ງ
ແນວນັ້ນຈຶ່ງວ່າດີ ຊັ້ນຕວ່າ!



## ທັກທາຍ ລະບາຍ

# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❋ **ສະແດງຄວາມຍິນດີນຳ ຍາ ສຸວັນນະວົງ** ພະນັກງານ-ລັດຖະກອນ **ສພຊ ເຂດ 14 ແຂວງສະລະວັນ** ທີ່ໄດ້ປະກາດແຕ່ງດອງຄອບຄອງຫົວໃຈຄົນຮັກຢ່າງເປັນທາງການ ແລະ ເຂົ້າພິທີມັດແຂນປ້ອນໄຂ່ໃນ**ອາທິດຜ່ານມາ** ຂໍໃຫ້ເປັນຄູ່ສ້າງ ສົມຣົດສົມຫວັງ ຄວາມສຸກໄຫລມາໂຮມ ຮ່ວມຮຽງກັບຈົນເຖົ້າ ໄມ້ຍອດທອງກະບອງແກ້ວ ຄຳບູຮານຂານກ່າວ ພະຍານຮັກຫລັ່ງລົ້ນ ກາຍຂ້າມເຖິງໂຫລ **ພຸ້ນເນີ!**

❋ **ອາ**ທິດຜ່ານມາ ເຫັນຂ່າວວ່າພະຍາດ**ໄຂ້ຍຸງລາຍ** ຍັງສືບຕໍ່ລະບາດຢ່າງຫລວງຫລາຍ ແລະຫນ້າເປັນຫ່ວງເປັນໄຍເພາະຜູ້ຕິດເຊື້ອໃຫມ່ມີໂຕເລກສູງຂຶ້ນນັບມື້ ຄືເປັນ**ອັນດັບໜຶ່ງ**ແມ່ນ**ນະຄອນຫລວງວຽງຈັນ** ຖັດຈາກນັ້ນແມ່ນແຂວງ**ຫລວງນ້ຳທາ** ຕໍ່ມາແມ່ນ**ອັດຕະປື...** ເຊິ່ງປັດຈຸບັນເສຍຊີວິດສະສົມ **22 ກໍລະນີ**ໃນຂອບເຂດທົ່ວປະເທດ 5 ປໍຈານບອກແຈ້ງ ເອົາໃຈໃສ່ປະຕິບັດ ພີ່ນ້ອງເອີຍ! ເພື່ອກຳຈັດຍຸງລາຍ ຜູ້ນຳພາເຊື້ອ ເສືອວ່າເປັນຕາຢ້ານ ອັນຕະລາຍບໍ່ຫລາຍຫໍ່ ຍຸງລາຍໂຕເລັກນ້ອຍ ຄົນຕາຍຍ້ອນມັນບໍ່ໄຫວ **ແລ້ວເດີ!**

❋ **ສປປລາວ** ໄດ້ຮັບການຄັດເລືອກ ໃຫ້ເປັນ **1 ໃນ 25** ປະເທດທົ່ວໂລກ ພາຍໃຕ້ຫົວຂໍ້ "ຊຸມຊົນຕໍ່ການອະນຸລັກເປັນປະໂຫຍດຕໍ່ບຸກຄົນ" ແລະ ໄດ້ຮັບການຄັດເລືອກໃຫ້ເປັນພຽງໜຶ່ງດຽວ ຈາກບັນດາ 10 ປະເທດອາຊຽນ ທີ່ມີຈຸດໝາຍປາຍທາງໃນການທ່ອງທ່ຽວທີ່ໜ້າສົນໃຈ ແລະຕື່ນເຕັ້ນທີ່ສຸດ**ສຳລັບປີ 2023** ຕາມຂ່າວຈານບອກແຈ້ງ ຈຸດເດັ່ນ ສປປລາວ ຊາວປະຊາດີໃຈ ພໍ່ເສີຍຮອຍຍິ້ມ ລາວກາຍເປັນປະເທດ ສູນກາງການທ່ອງທ່ຽວ ໂລກໄລກາຮັບຮູ້ ສາກົນຍ້ອງທົ່ວເຖິງ **ຄັກເດ!**

## ຊອບຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຄ້ອນຕີ**

ມື້ໜຶ່ງ ນາງເມຍ ບອກທິດເອບ ຊ້ອມແຊມເຄື່ອງໃຊ້ໃນເຮືອນທີ່ເປ່ເພມາດົນ ພາຍຫລັງທີ່ນັ່ງເບິ່ງຜົວຕອກເຫລັກຕະປູດົນເຕີບ ນາງກໍ່ເອີ່ຍຂຶ້ນວ່າ:

**ນາງເມຍ:** ຄ້ອນຕີອ້າຍປານຊາຍຟ້າຜ່າເນາະ!.

**ທິດເອບ:** ນ້ອງຢາກບອກວ່າ ມັນໄວແມ່ນບໍ່?

**ນາງເມຍ:** ບໍ່ ນ້ອງຢາກວ່າ ມັນຟາດບໍ່ຖືກບ່ອນເກົ່າຈັກເທື່ອ

**ທິດເອບ:** ແຮ່ງ!!!



## ຄະຕິເຕືອນໃຈ

# ດອກຂະຍອມ

ນຸ່ງເສື້ອລາຍຫມາເທົ່າ
ເອົາຄວາມເກົ່າ ຜິດກັບ

# ກົດໝາຍວ່າດ້ວຍການສຳຫລວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 56 ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໃຊ້ງົບປະມານຂອງລັດ ຫຼື ໄດ້ຮັບການຊ່ວຍເຫຼືອລ້າ ຈາກຕ່າງປະເທດ, ພາກພື້ນ ແລະ ສາກົນ ຕ້ອງເປັນລິຂະສິດຂອງລັດ.

ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ໝວດທີ 3
### ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ

**ມາດຕາ 57 ໂຄງລ່າງພື້ນຖານສຳຫຼວດວັດແທກ**

ໂຄງລ່າງພື້ນຖານສຳຫຼວດວັດແທກ ມີ ດັ່ງນີ້:

1. ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ;
2. ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ.

**ມາດຕາ 58 ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ**

ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແມ່ນ ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອກຳນົດຕາໜ່າງສຳຫຼວດວັດແທກພື້ນຖານແຫ່ງຊາດ ຢ່າງເປັນລະບົບ ແລະ ເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 59 ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ**

ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ແມ່ນ ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ວຽກສະເພາະ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອນຳໃຊ້ເຂົ້າໃນວຽກງານສະເພາະໃດໜຶ່ງ ຊຶ່ງຕ້ອງນຳໃຊ້ຂໍ້ມູນເຄົ້າການສຳຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດ ຕາມມາດຕະຖານເຕັກນິກແຫ່ງຊາດທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 60 ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ**

ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ ມີ ດັ່ງນີ້:

1. ການສ້າງໂຄງລ່າງພື້ນຖານການສຳຫຼວດວັດແທກ;
2. ການນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກ;
3. ການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ.

**ມາດຕາ 61 ການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກ**

ລັດຖະບານ ເປັນຜູ້ກຳນົດການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ການນຳໃຊ້ທີ່ດິນ ສຳລັບການສ້າງໂຄງລ່າງພື້ນຖານດັ່ງກ່າວ ຕາມການສະເໜີຂອງກະຊວງພາຍໃນ ເພື່ອນຳສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

ກະຊວງພາຍໃນ ເປັນຜູ້ຮັບຜິດຊອບສ້າງໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ພາຍຫຼັງຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງ.

ການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ຕ້ອງປະສານສົມທົບ ແລະ ເປັນເອກະພາບກັບ ກະຊວງພາຍໃນ ແລະ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

**ມາດຕາ 62 ການນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ຕ້ອງໄດ້ຂໍອະນຸຍາດນຳກະຊວງພາຍໃນ ແລະ ຕ້ອງລາຍງານພະແນກພາຍໃນ ແຂວງ, ນະຄອນຫຼວງ ຫຼື ຫ້ອງ ການພາຍໃນ ເມືອງ, ເທດສະບານ, ນະຄອນ ບ່ອນໂຄງລ່າງພື້ນຖານຕັ້ງຢູ່ ກ່ອນນຳໃຊ້ ພ້ອມທັງຮັບປະກັນບໍ່ໃຫ້ໂຄງລ່າງພື້ນຖານທີ່ຕົນນຳໃຊ້ນັ້ນເປ່ເພ ແລະ ເສຍຫາຍ ຕະຫຼອດໄລຍະເວລານຳໃຊ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະທີ່ຕົນສ້າງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບ ກະ ຊວງພາຍໃນ.

ຜູ້ມີສິດນຳໃຊ້ທີ່ດິນ ບ່ອນໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ ຕັ້ງຢູ່ ຕ້ອງອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ໂຄງລ່າງພື້ນຖານດັ່ງກ່າວ.

**ມາດຕາ 63 ການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພັນທະ ປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ. ໃນກໍລະນີພົບເຫັນໂຄງລ່າງພື້ນຖານສຳຫຼວດວັດແທກ ດັ່ງກ່າວ ເປ່ເພ, ເສຍຫາຍ, ຖືກທຳລາຍ, ຍົກຍ້າຍ ຫຼື ມີຄວາມສ່ຽງທີ່ຈະພາໃຫ້ມີຄວາມເສຍຫາຍ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ, ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ, ພະແນກພາຍໃນແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຢ່າງທັນການ ຕາມແຕ່ລະກໍລະນີ.

ກະຊວງພາຍໃນ ມີ ຄວາມຮັບຜິດຊອບໃນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ສ່ວນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການປົກປັກຮັກສາ ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ທີ່ດິນ ທີ່ເປັນບ່ອນຕັ້ງໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ແລະ ວຽກສະເພາະ ແມ່ນ ທີ່ດິນທີ່ຕ້ອງໄດ້ຮັບການປົກປັກຮັກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີມີຄວາມຈຳເປັນ ຕ້ອງໄດ້ຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການສຳຫຼວດແບບຕໍ່ເນື່ອງແຫ່ງຊາດບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງ ຄົມຂອງຊາດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການເຫັນດີຈາກກະຊວງພາຍໃນ ແລະ ຮັບຜິດຊອບໃຊ້ຈ່າຍໃນການກໍ່ສ້າງຄືນໃໝ່ທັງໝົດ, ສ່ວນການຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງວຽກສະເພາະນັ້ນ ກໍຕ້ອງແຈ້ງກະຊວງພາຍໃນ.

ຂັ້ນຕອນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VI
## ການປະກອບວິຊາຊີບ ແລະ ທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

### ໝວດທີ 1
### ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 64 ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການປະກອບວິຊາຊີບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ແມ່ນ ການປະກອບອາຊີບຂອງນັກວິຊາການດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຮັບອະນຸຍາດຈາກກະຊວງພາຍໃນ.

ຜູ້ຈະໄດ້ຮັບອະນຸຍາດເປັນຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີປະກາສະນິຍະບັດ ລະດັບວິຊາສະເພາະຊັ້ນສູງຂຶ້ນໄປທີ່ກ່ຽວຂ້ອງກັບວຽກງານການສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ມີຄວາມຮູ້ທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງໜ້ອຍ ສາມປີ ຂຶ້ນໄປ;
4. ຜ່ານການສອບເສັງ, ສຳພາດ ແລະ ຝຶກອົບຮົມ ຈາກກະຊວງພາຍໃນ;
5. ມີເງື່ອນໄຂມາດຕະຖານກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ມີເງື່ອນໄຂອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 65 ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

1. ຄຳຮ້ອງ ຕາມການກຳນົດຂອງກະຊວງພາຍໃນ;
2. ສຳເນົາຖ່າຍບັດປະຈຳຕົວ;
3. ສຳເນົາຖ່າຍປະກາສະນິຍະບັດ;
4. ໃບຢັ້ງຢືນການຜ່ານງານ ແລະ ປະສົບການກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ໃບແຈ້ງໂທດ;
6. ໃບກວດ ຫຼື ໃບຢັ້ງຢືນ ສຸຂະພາບ;
7. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 66 ການພິຈາລະນາ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ພາຍຫຼັງໄດ້ຮັບເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ແລ້ວ ກະຊວງພາຍໃນ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ເອກະສານດັ່ງກ່າວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກະຊວງພາຍໃນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ ເພື່ອປະກອບເອກະສານທີ່ກ່ຽວຂ້ອງຄືນໃໝ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ທີ່ມີຈຸດປະສົງປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ໃຫ້ຂໍອະນຸຍາດເຄື່ອນໄຫວ ນຳກະຊວງພາຍໃນ.

**ມາດຕາ 67 ການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ສາມາດເຄື່ອນໄຫວປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມຂອບເຂດວິຊາຊີບທີ່ຕົນໄດ້ຮັບອະນຸຍາດ ເທົ່ານັ້ນ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ຊຶ່ງເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ຕ້ອງເຄື່ອນໄຫວພາຍໃຕ້ການຕິດຕາມກວດກາ ແລະ ຄຸ້ມຄອງ ຂອງກະຊວງພາຍໃນ.

**ມາດຕາ 68 ການລາຍງານການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຕ້ອງສົ່ງບົດລາຍງານປະຈຳປີ ກ່ຽວກັບການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕໍ່ກະຊວງພາຍໃນຢ່າງຊ້າບໍ່ໃຫ້ກາຍເກົ້າສິບວັນນັບແຕ່ວັນທີ1 ເດືອນມັງກອນຂອງປີຖັດໄປ.

ໃນກໍລະນີຈຳເປັນ ກະຊວງພາຍໃນ ສາມາດແຈ້ງໃຫ້ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດນັ້ນ ສົ່ງບົດລາຍງານແບບລະອຽດ ກ່ຽວກັບການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ສະເພາະໃດໜຶ່ງທີ່ຕົນກຳລັງເຄື່ອນໄຫວ ຫຼື ຕາມທີ່ໄດ້ລາຍງານໃນບົດລາຍງານປຈຳປີ.

### ໝວດທີ 2
### ທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 69 ປະເພດທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ປະເພດທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

1. ການສຳຫຼວດວັດແທກຈຸດພິກັດຂັ້ນ 3, ຂັ້ນ 4, ຂັ້ນເຕັກນິກ;
2. ການສຳຫຼວດວັດແທກຈຸດລະດັບຂັ້ນ III, ຂັ້ນ IV, ຂັ້ນເຕັກນິກ;
3. ການສຳຫຼວດວັດແທກສ້າງແຜນທີ່ພູມສັນຖານ ທີ່ມີເນື້ອທີ່ໜ້ອຍກວ່າ ຊາວກິໂລຕາແມັດ;
4. ການສຳຫຼວດວັດແທກ ເພື່ອອອກແບບຮັບໃຊ້ວຽກສະເພາະ;
5. ການຖ່າຍພາບທາງອາກາດ, ຖ່າຍພາບພື້ນດິນ ແລະ ພື້ນນ້ຳ ເພື່ອສ້າງແຜນທີ່;
6. ການຕົກແຕ່ງແຕ້ມແຜນທີ່ພູມສັນຖານ ແລະ ແຜນທີ່ວຽກສະເພາະ;
7. ການບໍລິການຂໍ້ມູນ ຂ່າວສານ ພູມສາດ;
8. ການບໍລິການໃຫ້ຄຳປຶກສາ ກ່ຽວກັບການສຳຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານພູມສາດ;
9. ການພິມຈຳໜ່າຍແຜນທີ່;
10. ການບໍລິການກວດກາເຕັກນິກ, ເຊົ່າ ຫຼື ຈຳໜ່າຍ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 70 ເງື່ອນໄຂຂອງການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີທຶນພຽງພໍ ແລະ ເໝາະສົມກັບປະເພດທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ມີບົດວິພາກເສດຖະກິດ-ເຕັກນິກ, ແຜນດຳເນີນທຸລະກິດ, ມີສະຖານທີ່, ສຳນັກງານ ຫຼື ສິ່ງປຸກສ້າງ, ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່, ພາຫະນະຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກທີ່ເໝາະສົມ ແລະ ໄດ້ມາດຕະຖານ;
4. ມີນັກວິຊາການ, ຜູ້ຊ່ຽວຊານທີ່ມີຄວາມຮູ້ ແລະ ປະສົບການ ດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມຈຳນວນທີ່ເໝາະສົມກັບຂະໜາດຂອງທຸລະກິດ;
5. ບໍ່ເຄີຍຖືກສານຕັດສິນລົງໂທດຍ້ອນການກະທຳຜິດໂດຍເຈດຕະນາ.

ນອກຈາກນັ້ນ, ຍັງມີເງື່ອນໄຂສະເພາະ ຕາມແຕ່ລະປະເພດທຸລະກິດ ຊຶ່ງກະຊວງພາຍໃນ ເປັນຜູ້ກຳນົດ.

**ມາດຕາ 71 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

ອ່ານຕໍ່ສະບັບໜ້າ...




## ສອບເລື່ອງເປີເຊັນ

**# ໂດຍ: ປ່າວກະບື**

ທ່ານປະທານສະພາປົກຄອງເມືອງ ມີຄຳເຫັນຕໍ່ກອງປະຊຸມໃນວາລະຄົບຮອບໜຶ່ງປີທີ່ເຂົາເລີ່ມເຂົ້າປະຈຳການ. ເຂົາອ່ານ ບົດທີ່ເລຂາຂອງເຂົາຮ່າງໃຫ້ວ່າ: “ນັບແຕ່ຂ້າພະເຈົ້າເຂົ້າປະຈຳການໃນໜຶ່ງປີຜ່ານມາ ອັດຕາການຕາຍຂອງຄົນພາຍໃນເມືອງ ໄດ້ຫລຸດຈາກເຈັດເປີເຊັນ ລົງມາເປັນສີ່ຈຸດເກົ້າເປີເຊັນ (4,9%)”.

ຜູ້ຟັງທ່ານໜຶ່ງຊຶ່ງເປັນນັກໜັງສືພິມ ຕັ້ງຄຳຖາມຂຶ້ນວ່າ: “ຈຸດສຳຄັນຂອງເປີເຊັນນີ້ແມ່ນຫຍັງ, ໝາຍເຖິງຜູ້ຕາຍ ຫລືຜູ້ຍັງກັນແທ້. ທ່ານໝາຍຄວາມວ່າແນວໃດ ທີ່ວ່າອັດຕາການຕາຍຫລຸດລົງເປັນ 4,9 % ?”

ທ່ານປະທານເປັນຄົນບໍ່ຖະໜັດດ້ານສະຖິຕິ, ເຂົາງວາກຫລັງເບິ່ງວ່າ ເລຂາຂອງເຂົາຍັງຢູ່ຫລືບໍ່ ເພື່ອຂໍຄວາມຊ່ວຍເຫລືອ ແຕ່ເລຂາພັດບໍ່ຢູ່ຊໍ້າ. ທ່ານປະທານເວົ້າຂຶ້ນວ່າ:

“ຂ້າພະເຈົ້າໝາຍຄວາມວ່າ 4 ຄົນ ກຳລັງຕາຍ ສ່ວນອີກເກົ້າຄົນນັ້ນ ກຳລັງທັນໃຈປາ - ມໍ່ຊິຕາຍແລ້ວ”.

## PERCENTAGE QUIZ

**# By: BAOKBU**

The chairman of the town council was addressing a meeting on the first anniversary of his induction into office. “Since I took over a year ago,” he read from a text was prepared by his secretary, “the death rate in this town has come down from seven percent to four point nine percent.”

A journalist from the audience: “What’s this percentage point; either a person dies or doesn’t die. What do you mean by the death rate coming down to four percent point nine?”

The chairman, not well versed in statistics, looked behind if his secretary was nearby for help but he was not there. The chairman said: “What I mean is that four people are dying and nine are on the point to death.”

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK




## ໄຂ້ຍຸງລາຍ 2022

**17 ພະຈິກ 2022**

ຕິດເຊື້ອໃໝ່: 74

ຕິດເຊື້ອສະສົມ: 30,716

ເສຍຊີວິດສະສົມ 24 ຄົນ

ເສຍຊີວິດໃໝ່ 0 ຄົນ

| ແຂວງ | ຕິດເຊື້ອສະສົມ | ຕິດເຊື້ອໃໝ່ | ເສຍຊີວິດ | ແຂວງ | ຕິດເຊື້ອສະສົມ | ຕິດເຊື້ອໃໝ່ | ເສຍຊີວິດ |
|---|---|---|---|---|---|---|---|
| ນະຄອນຫຼວງວຽງຈັນ | 14,999 | 40 | 6 | ຄຳມ່ວນ | 544 | 3 | 0 |
| ຫຼວງນ້ຳທາ | 4,546 | 18 | 5 | ໄຊຍະບູລີ | 549 | 4 | 0 |
| ອັດຕະປື | 1,578 | 0 | 6 | ຈຳປາສັກ | 290 | 0 | 0 |
| ສາລະວັນ | 1,420 | 1 | 3 | ຜົ້ງສາລີ | 191 | 1 | 0 |
| ຫຼວງພະບາງ | 1,663 | 6 | 0 | ບໍລິຄຳໄຊ | 179 | 0 | 0 |
| ສະຫວັນນະເຂດ | 1,356 | 16 | 0 | ຊຽງຂວາງ | 118 | 0 | 2 |
| ເຊກອງ | 1,076 | 0 | 1 | ບໍ່ແກ້ວ | 123 | 0 | 0 |
| ວຽງຈັນ | 989 | 2 | 0 | ໄຊສົມບູນ | 95 | 0 | 0 |
| ອຸດົມໄຊ | 979 | 0 | 1 | ຫົວພັນ | 21 | 0 | 0 |

ບໍ່ມີພອນນ້ຳ ບໍ່ມີຍຸງລາຍ ບໍ່ມີໄຂ້ຍຸງລາຍ

ກະຊວງສາທາລະນະສຸກ, ສູນກິດສມເບື່ອດສຸຂະສານ ແລະ ສຸຂະສຶກສາ

# ບາງຄຳເຫັນກ່ຽວກັບກົດໝາຍການອະນຸຍາດ ໃຫ້ຄົນຕ່າງປະເທດຊື້ທີ່ດິນຂອງໄທ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໃນ**



ອີງຕາມບົດຄວາມທີ່ຖືກເຜີຍແຜ່ເມື່ອອາທິດຜ່ານມາໃຫ້ຮູ້ວ່າ: “ຮ່າງລະບຽບການວ່າດ້ວຍການໄດ້ຮັບທີ່ດິນເພື່ອໃຊ້ເປັນທີ່ຢູ່ອາໄສຂອງຄົນຕ່າງດ້າວ ຕາມມາດຕະການກະຕຸ້ນເສດຖະກິດ ແລະ ການລົງທຶນ ໂດຍການດຶງດູດຄົນຕ່າງປະເທດທີ່ມີທ່າແຮງສູງເຂົ້າໄທ...” ຫລື ຮ່າງກົດໝາຍວ່າດ້ວຍການເປີດໂອກາດໃຫ້ຄົນຕ່າງປະເທດສາມາດຊື້ທີ່ດິນຂອງປະເທດໄທທີ່ຄະນະລັດຖະບານໄດ້ຮັບຮອງເອົາໃນວັນທີ 25 ຕຸລາ 2022 ເຖິງແມ່ນວ່າຄະນະລັດຖະບານໄດ້ມີມະຕິຢຸດການພິຈາລະນາດຳລັດເພື່ອຫລຸດຜ່ອນກະແສການຕ້ານທີ່ຮຸນແຮງໃນສັງຄົມ ແຕ່ກໍຍັງມີບັນຫາສຳຄັນທີ່ຈະປຶກສາຫາລືກັນ.

ແລະ ສຳຄັນທີ່ສຸດ, ການໂຈະນີ້ບໍ່ແມ່ນການຍົກເລີກຄວາມຄິດ ເຊິ່ງອີກບໍ່ດົນກໍອາດຈະກັບມາພິຈາລະນາເຊັ່ນດຽວກັບປີທີ່ຜ່ານມາທີ່ໂຈະແລ້ວ ແລະ ກັບມາຄືນໃນປີນີ້.

ຕາມການວິເຄາະ ໄດ້ຍົກໃຫ້ເຫັນວ່າ ບໍ່ວ່າຈະແນວໃດກໍຕາມ ຮ່າງກົດໝາຍນີ້ຕ້ອງໄດ້ຮັບການພິຈາລະນາຄືນໃໝ່ ແລະ ປະກາດໃຊ້ ເນື່ອງຈາກວ່າຫລາຍຂະແໜງການເຫັນດີກ່ຽວກັບຈຸດປະສົງຂອງກົດໝາຍວ່າມີຄວາມຈຳເປັນຕ້ອງການດຶງເງິນຈາກຕ່າງປະເທດມາກະຕຸ້ນເສດຖະກິດ ແລະ ຕ້ອງອຳນວຍຄວາມສະດວກໃຫ້ຄົນຕ່າງປະເທດທີ່ຕ້ອງການລົງທຶນ ແລະ ເຮັດວຽກ ເພື່ອເພີ່ມທະວີສັກກະຍະພາບການແຂ່ງຂັນຂອງປະເທດ.

ບົດຄວາມຍັງໃຫ້ຮູ້ວ່າ: ເຖິງແມ່ນວ່າບໍ່ມີການດັດແກ້ລະບຽບການຕາມຮ່າງນີ້ ປະເທດໄທ ກໍມີລະບຽບການ ສະບັບປີ 2002 ຢູ່ແລ້ວທີ່, ຍັງຕ້ອງໄດ້ປັບປຸງ. ສະນັ້ນ, ໃນໄລຍະນີ້ຄວນຈະເປັນບາດກ້າວກັບຄືນໄປຮັບຟັງຄວາມຄິດເຫັນ ແລະ ວິເຄາະຢ່າງຮອບດ້ານ ເພື່ອແກ້ໄຂກົດໝາຍໃຫ້ອອກມາດີກວ່າເກົ່າ ແລະ ໄດ້ຮັບຜົນປະໂຫຍດຂອງໄທຫລາຍກວ່າສະບັບທີ່ຜ່ານມາ.

**ແຫລ່ງຂ່າວ: plusthairath**

# ອັດກອງປະຊຸມສຸດຍອດກຸ່ມ G20 ຄັ້ງທີ 17

**ແປ ແລະ ຮຽບຮຽງ: ທະນາກອນ**



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 16 ພະຈິກ 2022 ກອງປະຊຸມສຸດຍອດກຸ່ມ G20 ຄັ້ງທີ 17 ໄດ້ອັດລົງຢູ່ເກາະບາຫລີຂອງອິນໂດເນເຊຍ ເຊິ່ງອິນເດຍ ເປັນປະເທດທີ່ຮັບໜ້າທີ່ຕໍ່ຈາກອິນໂດເນເຊຍ ໃຫ້ເປັນປະເທດປະທານໝູນວຽນຂອງກຸ່ມ G20.

ກອງປະຊຸມສຸດຍອດຄັ້ງນີ້ ມີຫົວຂໍ້ວ່າ: “ພ້ອມກັນຟື້ນຟູ, ຟື້ນຟູຢ່າງແຂງແຮງ” ແລະ ຖືພື້ນຖານໂຄງລ່າງສາທາລະນະສຸກໂລກ, ການປ່ຽນຮູບແບບດີຈີຕອນ ແລະ ການປ່ຽນເປັນພະລັງງານແບບຍືນຍົງເປັນ 3 ຫົວຂໍ້ທີ່ໄດ້ຫາລືກັນກ່ອນນີ້.

ກຸ່ມ G20 ສ້າງຕັ້ງຂຶ້ນໃນປີ 1999 ສະມາຊິກໃນກຸ່ມລວມມີ: ກຸ່ມເສດຖະກິດທີ່ພັດທະນແລ້ວ ແລະ ກຸ່ມເສດຖະກິດຕະຫລາດຈະເລີນໃໝ່, ເສີມຂະຫຍາຍບົດບາດສຳຄັນເຂົ້າໃນວຽກງານຂອງໂລກ, ໄດ້ກາຍເປັນກົນໄກຫລາຍຝ່າຍ ເພື່ອພ້ອມກັນຮັບມືກັບບັນຫາໃນໂລກ.

**ແຫລ່ງຂ່າວ: CRI**

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວີສັນ ແກ້ວສຸວັນ

ຫົວໜ້າບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

ກອງບັນນາທິການ
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

ອອກແບບຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ